ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

# ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ")

**ວັນ, ເວລາ ແລະ ສະຖານທີ່ :**

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 24 ເມສາ 2025 ເວລາ 09:42 ໂມງ ທີ່ ໂຮງແຮມ ລາວພາຊ່າ, ຫ້ອງ May Hall, ຖະໜົນ 63 ສາມແສນໄທ, ນະຄອນຫລວງວຽງຈັນ.

**ກ່ອນທີ່ຈະເປີດກອງປະຊຸມ:**

ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024, ປະທານກອງປະຊຸມໄດ້ກ່າວຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມ ທັງໝົດ 07 ທ່ານ, 274,529,680 ຮຸ້ນ ຫຼື ເທົ່າກັບ 68.63% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການໃນເວລາ 09:42 ໂມງ ແລະ ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

**ຜູ້ເຂົ້າຮ່ວມ:**

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**

| | | | | |
|---|---|---|---|---|
| 1. | ທ່ານ | ທີຣະ | ຊຸຕິວະລາພອນ | ປະທານສະພາບໍລິຫານ |
| 2. | ທ່ານ | ກິດຕິ | ຕິກຂະປັນຍາກຸນ | ຮອງປະທານສະພາບໍລິຫານ |
| 3. | ທ່ານ | ມານົບ | ຕຣີລິດວິໄລ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ |
| 4. | ທ່ານ | ວິນຍູ | ຈິລະປະພາການ | ສະມາຊິກສະພາບໍລິຫານອິດສະຫຼະ |

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ ຜ່ານລະບົບ VDO Conference :**

| | | | | |
|---|---|---|---|---|
| 1. | ທ່ານ | ໄວຮຸ່ງ | ມີນາກຸນ | ສະມາຊິກສະພາບໍລິຫານ |
| 2. | ທ່ານ | ໂກວິດ | ເກີດສິລິລັກ | ສະມາຊິກສະພາບໍລິຫານ |
| 3. | ທ່ານ | ພົງສັກ | ຊານົບມາດ | ສະມາຊິກສະພາບໍລິຫານ |
| 4. | ທ່ານ | ສຸລະສັກ | ທຳໂມ | ສະມາຊິກສະພາບໍລິຫານອິດສະຫຼະ |
| 5. | ທ່ານນາງ | ສິລິລັດ | ພົງພັກດີ | ສະມາຊິກສະພາບໍລິຫານອິດສະຫຼະ |

- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**

1. ທ່ານ ທີລະພົງ ຢອງປະໂຄນ — ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ

| | | |
|---|---|---|
| 2. | ທ່ານນາງ ມະລິ ໄຊຍະວົງ | ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ |
| 3. | ທ່ານນາງ ປາດທະໜາ ສົມບຸດ | ຜູ້ຮັບມອບສິດ ຈາກ ທ່ານ ພອນປະເສີດ ແກ້ວດວງຈິດ ຕ່າງໜ້າຂອງຜູ້ຖືຮຸ້ນລາຍຍ່ອຍ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ |
| 4. | ທ່ານນາງ ວັນນະພອນ ສຸບັນທາ | ຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ |
| 5. | ທ່ານນາງ ວົງອຸໄທ ມຸລຣັຕນ໌ | ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະປະເມີນການດຳເນີນກອງປະຊຸມ |
| 6. | ທ່ານ ອັດສະວິນ ຂັນທະວົງ | ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ |
| 7. | ທ່ານ ຊະຫຼອງໄຊ ຊາຍຸຕະຣາພົງ | ຕ່າງໜ້າຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ |

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

1. **ວາລະ:**

    1. ພິຈາລະນາຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2023.
    2. ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024.
    3. ພິຈາລະນາຮັບຮອງໃບສະແດງສະຖານະການເງິນຂອງບໍລິສັດ (ໃບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024.
    4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2024 ເປັນຄັງສຳຮອງຕາມລະບຽບການ ແລະ ງົດຈ່າຍເງິນປັນຜົນ.
    5. ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ.
    6. ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025.
    7. ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ສຳລັບປີ 2025.
    8. ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2025.
    9. ພິຈາລະນາເລື່ອງອື່ນ (ຖ້າມີຜູ້ສະເໜີເພີ່ມເຕີມ)

**2. ວິທີລົງຄະແນນສຽງ**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
- ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດ ບໍ່ເຫັນດີ ຫຼື ງົດອອກສຽງ ແມ່ນໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ
- ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

**3. ການນັບຄະແນນສຽງ**

- ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີ ຫຼື ງົດອອກສຽງ ຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ຫຼື ງົດອອກສຽງ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວມານັບຄະແນນສຽງຕື່ມອີກ

ປະທານກອງປະຊຸມສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

**ວາລະທີ 1 ຮັບຮອງ ລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2023 ທີ່ປະຊຸມເມື່ອວັນທີ 25 ເມສາ 2024 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ເຊິ່ງໄດ້ປະຊຸມ ໃນວັນທີ 25 ເມສາ 2024.

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ເຊິ່ງໄດ້ປະຊຸມ ໃນວັນທີ 25 ເມສາ 2024 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ.

**ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ເປັນຜູ້ນຳສະເໜີບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024 ເຊິ່ງມີລາຍລະອຽດດັ່ງນີ້:

- **ຈຳນວນຍອດສິນເຊື່ອໃໝ່ ປີ 2023 ທຽບໃສ່ ປີ 2024**

| | 2023 | 2024 | ຜົນຕ່າງ |
|---|---|---|---|
| ຈຳນວນສັນຍາ | 4,247 | 3,832 | - 9.8% |
| ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ) | 66,813 | 75,183 | +12.5% |

- **ຜົນການດຳເນີນງານຂອງປີ 2023 ປຽບທຽບກັບ ປີ 2024**

| ລາຍການ | 2023 (ລ້ານກີບ) | 2024 (ລ້ານກີບ) | ຜົນຕ່າງ |
|---|---|---|---|
| ກຳໄລສຸດທິ (ກ່ອນພາສີ) | 10,073.6 | 7,404.1 | -2,669.5 |
| ພາສີນິຕິບຸກຄົນ | 757.0 | 758.0 | + 1.0 |
| ກຳໄລສຸດທິ ( ຫຼັງພາສີ ) | 9,316.6 | 6,646.1 | -2,670.5 |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ.

**ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານນາງ ສຸລິພອນ ສຸວັນໄຊລົບ ຮັກສາການ ຮອງຜູ້ອຳນວຍການດ້ານການເງິນ ເປັນຜູ້ນຳສະເໜີກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024 ເຊິ່ງມີລາຍລະອຽດດັ່ງນີ້:

- ສະຖານະທາງການເງິນ ວັນທີ 31 ທັນວາ 2024
  - ຊັບສິນລວມ 85,521.5 ລ້ານກີບ
  - ໜີ້ສິນລວມ 4,639.6 ລ້ານກີບ
  - ສ່ວນຂອງຜູ້ຖືຮຸ້ນ 80,881.9 ລ້ານກີບ
  - ລາຍໄດ້ລວມ 56,040.3 ລ້ານກີບ
  - ລາຍຈ່າຍລວມ 48,636.1 ລ້ານກີບ
  - ກຳໄລສຸດທິ 6,646.1 ລ້ານກີບ

- **ງົບສະແດງສະຖານະທາງການເງິນຂອງບໍລິສັດ ບັນຊີກຳໄລຂາດທຶນ ປະຈຳປີ 2024**

| Financial Ratio ທີ່ສຳຄັນ | 2023 | 2024 | Change (+/-) |
|---|---|---|---|
| Return on Equity | 11.6% | 8.2 % | -3.4% |
| Return on Asset | 0.9% | 7.8% | +6.9% |
| D/E (Times) | 11.4 | 0.1 | -11.3 times |
| Net profit margin | 21.3% | 11.9% | -9.4% |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາ ແລະ ຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ.

**ວາລະທີ 4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2024 ເປັນຄັງສຳຮອງຕາມລະບຽບການ ແລະ ງົດຈ່າຍເງິນປັນຜົນ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2024 ແລະ ງົດຈ່າຍເງິນປັນຜົນ ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ນຳສະເໜີກ່ຽວກັບ ການຈັດສັນກຳໄລສຸດທິ ປະຈຳປີ 2024 ແລະ ງົດຈ່າຍເງິນປັນຜົນ ເຊິ່ງມີບົດສະຫຼຸບດັ່ງນີ້:

- ກຳໄລສຸດທິຫຼັງຫັກພາສີອາກອນປີ 2024 6,646,070,716 ກີບ ເທົ່າກັບ 100.00 %
    1. ສຳຮອງຕາມກົດໝາຍ 664,607,071 ກີບ ເທົ່າກັບ 10,00 %
    2. ສະສົມໄວ້ໃນກຳໄລສະສົມ 5,981,463,645 ກີບ ເທົ່າກັບ 90.0 %

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ພິຈາລະນາຮັບຮອງອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2024 ແລະ ງົດຈ່າຍເງິນປັນຜົນ.

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2024 ເປັນຄັງສຳຮອງຕາມລະບຽບການ ແລະ ງົດຈ່າຍເງິນປັນຜົນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

- ສຳຮອງຕາມກົດໝາຍ 664,607,071 ກີບ ເທົ່າກັບ 10,00 %
- ສະສົມໄວ້ໃນກຳໄລສະສົມ 5,981,463,645 ກີບ ເທົ່າກັບ 90.0 %
- ລວມ 6,646,070,716 ກີບ ເທົ່າກັບ 100.00 %

**ວາລະທີ 5 ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ.

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ.

**ວາລະທີ 6 ພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ເປັນຜູ້ນຳສະເໜີກ່ຽວກັບ ພິຈາລະນາອະນຸມັດ ແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025 ດັ່ງນີ້:

- ຕາມແຜນທຸລະກິດປີ 2025 ບໍລິສັດໄດ້ປະມານກຳໄລສຸທິ ຈຳນວນ 12,197.4 ລ້ານກີບ ເພີ່ມຂື້ນ 5,551.3 ລ້ານກີບ ເມື່ອປຽບທຽບປີ 2024.
- ການຕະຫຼາດ. ບໍລິສັດມີການວາງແຜນ ຈຳນວນສັນຍາໃຫ່ມ 4,320 ສັນຍາ ດ້ວຍຍຸດທະສາດ ດັ່ງລຸ່ມນີ້:

## ພາບລວມ ແຜນງານປີ 2025

| | |
|---|---|
| • ດຳນເນີນທຸລະກິດ | - ຜ່ອນຄຳ |
| | - ຜ່ອນລົດຈັກ ແລະ ອື່ນໆ |
| • ເປີດສາຂາ ຫຼື ໜ່ວຍບໍລິການ | - ບໍ່ມີ |
| • ກູ້ເງິນເພີ່ມ | - 39,500 ລ້ານກີບ |
| • ລວມເງິນກູ້ຢືມທັງໝົດ | - 39,500 ລ້ານກີບ |

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

## ຄາດການແຜນງານປີ 2024 ທຽບກັບ ປີ 2025

| ລາຍການ | 2024 | 2025 | ຜົນຕ່າງ |
|---|---|---|---|
| ກໍາໄລສຸດທິ (ກ່ອນພາສີ) | 7,404.1 | 14,999.4 | + 7,595.3 |
| ພາສີນິຕິບຸກຄົນ | 758.0 | 2,802.0 | + 2,044.0 |
| ກໍາໄລສຸດທິ (ຫຼັງພາສີ) | 6,646.1 | 12,197.4 | + 5,551.3 |

- **Financial Highlight as of end of 2025**
- Debt to Equity 0.54 times
- Net Profit Margin 25.50 %
- Return of Asset 8.44 %
- Return of Equity 13.00 %
- Earning Per Share (100 Kip) 30.39 kip/share
- Book Value 361.17 kip/share
- Number of Total share 400.000.000 shares

- ແຜນເງິນລົງທຶນ ແລະ ຈັດຊື້ຊັບສິນປະຈໍາປີ 2025

| ປະເພດຂອງການລົງທຶນ | ກີບ |
|---|---|
| ອາຄານສໍານັກງານ ແລະ ຄ່າຕົກແຕ່ງ | - |
| ຍານພາຫະນະ | - |
| ອຸປະກອນຄອມພິວເຕີທັງ Hardware | 270,000,000 |
| ອຸປະກອນຄອມພິວເຕີທັງ Software | - |
| ອຸປະກອນຄອມພິວເຕີ PC | 65,500,000 |
| ອຸປະກອນສໍານັກງານ | 624,000,000 |
| ງົບປະມານຈັດຫາອຸປະກອນເຄື່ອງໃຊ້ໃນການເປີດສາຂາໃໝ່ | - |
| ລາຍຈ່າຍອື່ນໆ | 270,000,000 |
| **ລວມທັງໝົດ** | **1,229,500.000** |

- **ອັດຕາກຳລັງ ແລະ ເງິນເດືອນຂອງພະນັກງານ ປະຈຳປີ 2025**

  ຈຳນວນພະນັກງານໃນທ້າຍປີ 2025 ມີຈຳນວນ 115 ຄົນ ຊຶ່ງມີລາຍຈ່າຍກ່ຽວກັບພະນັກງານ ແລະ ສະມາຊິກສະພາບໍລິຫານ ລວມທັງໝົດ ຈຳນວນ 17,379.9 ລ້ານກີບ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025 ໂດຍຂໍສະເໜີໃຫ້ມອບອຳນາດໃຫ້ແກ່ສະພາບໍລິຫານ ມີອຳນາດໃນການທົບທວນແຜນງານໃໝ່ ຕາມຄວາມຈຳເປັນ ແລະ ເໝາະສົມ

.

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025 ໂດຍມອບອຳນາດໃຫ້ສະພາບໍລິຫານ ມີອຳນາດໃນການທົບທວນແຜນງານໃໝ່ ຕາມຄວາມຈຳເປັນ ແລະ ເໝາະສົມ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 7 ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2025**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2025 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ເປັນຜູ້ນຳສະເໜີກ່ຽວກັບ ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2025 ຕາມລາຍລະອຽດດັ່ງນີ້:

ກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2025

| | ລາຍລະອຽດ | ປະທານ | ກຳມະການ | ຫົວໜ່ວຍ |
|---|---|---|---|---|
| 1. | ຜົນຕອບແທນລາຍເດືອນ | 12,000,000 | 10,000,000 | ກີບ/ເດືອນ/ທ່ານ |
| 2. | ເບ້ຍປະຊຸມ:<br>- ສະພາບໍລິຫານ<br>- ຄະນະກຳມະການຊຸດຍ່ອຍ | <br>2,500,000<br>1,500,000 | <br>1,500,000<br>1,000,000 | <br>ກີບ/ຄັ້ງ/ທ່ານ<br>ກີບ/ຄັ້ງ/ທ່ານ |
| 3. | ຜົນຕອບແທນ (ບຳເນັດ) ປະຈຳປີ | 1 ສ່ວນຮ້ອຍ ຈາກປະລິມານການກຳໄລສຸດທິປະຈຳປີ 2025 (ພິຈາລະນາປັບເພີ່ມ ຫຼື ຫຼຸດລົງຕາມຜົນງານຈິງ) | | |

**ໝາຍເຫດ:** ຜົນຕອບແທນຂ້າງຕົ້ນ ບໍ່ລວມເງິນເດືອນ ແລະ ໂບນັດຂອງຜູ້ອຳນວຍການທີ່ເຮັດໜ້າທີ່ບໍລິຫານງານປະຈຳວັນ ໂດຍເງິນເດືອນ ແລະ ໂບນັດຂອງຜູ້ອຳນວຍການໄດ້ລວມຢູ່ໃນແຜນການດຳເນີນການປະຈຳປີ 2025 ທີ່ຜ່ານການອະນຸມັດແລ້ວ (ວາລະທີ່ 6)

**ຜົນຕອບແທນຂອງຜູ້ອຳນວຍການໃນ 3 ປີທີ່ຜ່ານມາ ມີດັ່ງນີ້** **(ໜ່ວຍກີບ)**

| ປີ | ລາຍເດືອນ | ເບ້ຍປະຊຸມ | ບຳເນັດປະຈຳປີ | ລວມ |
|---|---|---|---|---|
| 2024 | 893.750.000 | 83.000.000 | - | 976,750,000 |
| 2023 | 713.125.000 | 106.009.000 | 90.000.000 | 909.134.000 |
| 2022 | 735.000.000 | 121.000.000 | - | 856.000.000 |

ຜົນຕອບແທນຂ້າງເທິງ ຍັງບໍ່ໄດ້ລວມກັບເງິນເດືອນຂອງຜູ້ອຳນວຍການ ທີ່ເຮັດໜ້າທີບໍລິຫານງານປະຈຳວັນ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2025.

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ສຳລັບປີ 2025 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 8 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີ ປະຈຳປີ 2025**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2025 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ວິນຍູ ຈີລະປະພາການ ສະມາຊິກສະພາບໍລິຫານອິດສະຫຼະ ແລະ ປະທານຄະນະກຳມະການກວດສອບ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2025 ໂດຍລາຍງານໃຫ້ກອງປະຊຸມຊາບວ່າ ຕາມການປະຊຸມຂອງຄະນະກຳມະການກວດສອບ ເມື່ອວັນທີ 07 ກຸມພາ 2025 ແລະ ການປະຊຸມສະພາບໍລິຫານ ເມື່ອວັນທີ 18 ກຸມພາ 2025 ມີຄວາມເຫັນວ່າ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ເນື່ອງຈາກເປັນບໍລິສັດທີ່ມີມາດຕະຖານການເຮັດວຽກທີ່ດີ, ມີຄວາມຮູ້ຄວາມຊຳນານດ້ານການກວດສອບ ແລະ ເປັນບໍລິສັດທີ່ຢູ່ໃນ approved list ຂອງຕະຫຼາດຫຼັກຊັບລາວ ແລະ ເປັນບໍລິສັດກວດສອບຂອງບໍລິສັດໃນປີທີ່ຜ່ານມາ ຊຶ່ງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບທຸລະກິດເຊົ່າສິນເຊື່ອ ແລະ ມາດຕະຖານບັນຊີ IFRS ເປັນຢ່າງດີ ຈຶ່ງຂອງສະເໜີບົດສະຫຼຸບດັ່ງຕໍ່ໄປນີ້:

- ແຕ່ງຕັ້ງ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບພາຍນອກບໍລິສັດ ປະຈຳປີ 2025.
- ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2025 ເປັນເງິນ 41,000 ໂດລາ ໂດຍແບ່ງເປັນກວດສອບບໍລິສັດຈຳນວນ 34,500 ໂດລາ ແລະ ກວດສອບສຳລັບກຸ່ມບໍລິສັດ ຈຳນວນ 6,500 ໂດລາ ບໍ່ລວມ VAT ແລະ Out of Pocket.

- **ຜູ້ກວດສອບບັນຊີພາຍນອກ ແລະ ຄ່າຕອບແທນ ສຳລັບ 3 ປີທີ່ຜ່ານມາ** ດັ່ງນີ້:

| | ປີ | ຜູ້ກວດສອບ | ຜົນຕອບແທນລວມ | For Group |
|---|---|---|---|---|
| - | 2024 | PWC (Lao) | 33,500 USD | 6,000 USD |
| - | 2023 | PWC (Lao) | 32,000 USD | 6,000 USD |
| - | 2022 | PWC (Lao) | 30,000 USD | 13,000 USD |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2025

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ງົດອອກສຽງ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 274,529,680 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2025 ເປັນເງິນ 41,000 ໂດລາ ໂດຍແບ່ງເປັນກວດສອບບໍລິສັດ ຈຳນວນ 34,500 ໂດລາ ແລະ ກວດສອບສຳລັບກຸ່ມບໍລິສັດ ຈຳນວນ 6,500 ໂດລາ ບໍ່ລວມ VAT ແລະ Out of Pocket. ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 09 ເລື່ອງອື່ນໆ (ຖ້າມີ)**

ບໍ່ມີທ່ານໃດສະເໜີ ຫຼື ສອບຖາມເລື່ອງໃດໆເພີ່ມເຕີມ

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 10:40 ໂມງ

| | |
|---|---|
| **ຜູ້ອຳນວຍການ** | **ປະທານກອງປະຊຸມ** |
| **(ທ່ານ ມານົບ ຕຣີລິດວິໄລ)** | **(ທ່ານ ທີຣະ ຊູຕິວະລາພອນ)** |

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY